ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການລັດຖະບານ
ຄະນະພັດທະນາຊົນນະບົດ ແລະ
ລົບລ້າງຄວາມທຸກຍາກ ຂັ້ນສູນກາງ (ຄພທສ)
**ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ)**

ເລກທີ 1039 /ທລຍ
11 NOV 2015

## ບົດສະຫຼຸບປະຈຳເດືອນ ຕຸລາ ແລະ ແຜນວຽກເດືອນ ພະຈິກ 2015

ຕະຫຼອດເດືອນ ຕຸລາ 2015 ທີ່ຜ່ານມາ ທລຍ ໄດ້ສຸມໃສ່ວຽກງານການຈັດຕັ້ງປະຕິບັດໂຄງການຍ່ອຍ ແລະ ກິດຈະກຳຕ່າງໆໃນຮອບວຽນທີ 12 ແລະ ຮອບວຽນທີ່ຜ່ານມາທີ່ຍັງລ່າຊ້າ. ໄປຄຽງຄູ່ກັບການສະຫຼຸບຕີລາຄາຜົນໄດ້ຮັບ ແລະ ສິ່ງທ້າທາຍຂອງການເຄື່ອນໄຫວຂອງວຽກງານຂອງ ທລຍ ຕະຫຼອດໄລຍະຜ່ານມາ, ວຽກງານທີ່ພົ້ນເດັ່ນແມ່ນໄດ້ປະກອບສ່ວນເຂົ້າໃນກອງປະຊຸມອາຊຽນ ເພື່ອພັດທະນາຊົນນະບົດ ແລະ ລົບລ້າງຄວາມທຸກຍາກ ໃນລະຫວ່າງວັນທີ 13-17 ຕຸລາ 2014 ທັງດ້ານວິຊາການ ແລະ ດ້ານເນື້ອໃນ.

ວຽກງານທີ່ພົ້ນເດັ່ນອີກອັນໜຶ່ງ ແມ່ນການກະກຽມການຈັດຕັ້ງປະຕິບັດໃນສົກປີ 2015 – 2016 ເຊິ່ງແມ່ນໄລຍະສຸດທ້າຍຂອງ ທລຍ ໄລຍະທີ 2. ສະນັ້ນຈຶ່ງມີຄວາມຈຳເປັນຕ້ອງສັງລວມຄືນບັນດາບົດຮຽນທີ່ໄດ້ຮັບຂອງ ທລຍ 2 ເພື່ອເປັນຂໍ້ມູນສຳຄັນແກ່ການກະກຽມ ທລຍ ໄລຍະທີ 3 ໃຫ້ມີປະສິດທິຜົນກວ່າເກົ່າ ແລະ ຕ້ອງສອດຄ່ອງກັບແຜນພັດທະນາຂອງລັດຖະບານ ໝາຍຄວາມວ່າຕ້ອງເຮັດວຽກໄປໃນລວງດຽວກັນ ແລະ ມີການປະສານສົມທົບທີ່ກົມກຽວກັນທີ່ສຸດ.

### 1. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍ

### 1.1 <u>*ຮອບວຽນ 12 (ສົກປີ 2014-2015)*</u>

ສຳລັບຮອບວຽນ 12 (ສົກປີ 2014-2015) ມີຈຳນວນທັງໝົດ 438 ໂຄງການຍ່ອຍ ໃນນັ້ນຈຳນວນໂຄງການຍ່ອຍພາຍໃຕ້ທຶນພາຍໃນ ມີ 74 ໂຄງການ ເປັນມູນຄ່າປະມານ 16 ຕື້ກີບ ທີ່ໄດ້ຜ່ານການປະມູນແລ້ວ. ໃນນັ້ນຈັດຕັ້ງປະຕິບັດສຳເລັດແລ້ວ 100% ມີ 353 ໂຄງການເທົ່າກັບ 80.5 %, ຄວາມຄືບໜ້າຫລາຍກວ່າ 50% ມີ 52 ໂຄງການ, ໜ້ອຍກວ່າ 50% ມີ 16 ໂຄງການ ສ່ວນທີ່ເຫລືອ 17 ໂຄງການແມ່ນກຳລັງກະກຽມເພື່ອຈັດຕັ້ງປະຕິບັດ ດັ່ງລາຍລະອຽດຕາມຕາຕະລາງລຸ່ມນີ້:

ຕາຕະລາງ 1. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 12

| ແຂວງ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ສະຫວັນນະເຂດ | 59 | 54 | 1 | 0 | 4 |
| ສາລະວັນ | 31 | 12 | 19 | 0 | 0 |
| ຊຽງຂວາງ | 42 | 41 | 1 | 0 | 0 |
| ຜົ້ງສາລີ | 25 | 8 | 10 | 4 | 3 |
| ຫລວງນ້ຳທາ | 21 | 17 | 1 | 1 | 2 |
| ຫົວພັນ | 124 | 119 | 5 | 0 | 0 |
| ຫຼວງພະບາງ | 48 | 36 | 2 | 6 | 4 |
| ອຸດົມໄຊ | 50 | 43 | 4 | 1 | 2 |
| ອັດຕະປື | 18 | 15 | 2 | 1 | 0 |
| ເຊກອງ | 20 | 8 | 7 | 3 | 2 |
| ລວມ | **438** | **353** | **52** | **16** | **17** |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 31 ຕຸລາ 2015*

ຕາຕະລາງ 2. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 12 (ແຍກຕາມຂະແໜງການ)

| ຂະແໜງການ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ກະສິກຳ ແລະ ປ່າໄມ້ | 41 | 37 | 3 | 0 | 1 |
| ຄົມມະນາຄົມ | 75 | 56 | 8 | 6 | 5 |
| ສາທາລະນະສຸກ | 23 | 18 | 2 | 0 | 3 |
| ສຶກສາ | 165 | 131 | 21 | 8 | 5 |
| ນ້ຳສະອາດ ແລະ ສຸຂະອະນາໄມ | 132 | 110 | 18 | 2 | 2 |
| ພະລັງງານ ແລະ ບໍ່ແຮ່ | 2 | 1 | 0 | 0 | 1 |
| ລວມ | 438 | 353 | 52 | 16 | 17 |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 31 ຕຸລາ 2015*

## 1.2. ຮອບວຽນ 11 (ສົກປີ 2013-2014)

ການຈັດຕັ້ງປະຕິບັດມາຮອດທ້າຍເດືອນ ກັນຍາ 2015 ມີຄວາມຄືບໜ້າດັ່ງນີ້: ຈາກທັງໝົດ 333 ໂຄງການ, 328 ໂຄງການ (98.4%) ແມ່ນໄດ້ຈັດຕັ້ງປະຕິບັດສຳເລັດ 100%, ສຳລັບໂຄງການທີ່ມີຄວາມຄືບໜ້າຫລາຍກວ່າ 50% ແມ່ນມີຈຳນວນ 5 ໂຄງການ ແລະ ຄາດວ່າຈະສຳເລັດໃນມໍ່ໆ ນີ້. ອີງຕາມຕາຕະລາງຂ້າງລຸ່ມນີ້ ເຫັນວ່າທຸກ ໂຄງການ ໃນຮອບວຽນດັ່ງກ່າວ ແມ່ນໄດ້ເລີ່ມຈັດຕັ້ງປະຕິບັດທັງໝົດດັ່ງລາຍລະອຽດຕາມຕາຕະລາງ 3 ແລະ 4.

**ຕາຕະລາງ 3. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 11**

| ແຂວງ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ສະຫວັນນະເຂດ | 45 | 45 | 0 | 0 | 0 |
| ສາລະວັນ | 16 | 16 | 0 | 0 | 0 |
| ຊຽງຂວາງ | 29 | 29 | 0 | 0 | 0 |
| ຜົ້ງສາລີ | 23 | 23 | 0 | 0 | 0 |
| ຫຼວງນໍ້າທາ | 16 | 14 | 2 | 0 | 0 |
| ຫົວພັນ | 69 | 69 | 0 | 0 | 0 |
| ຫຼວງພະບາງ | 43 | 42 | 1 | 0 | 0 |
| ອຸດົມໄຊ | 54 | 54 | 0 | 0 | 0 |
| ອັດຕະປື | 18 | 16 | 2 | 0 | 0 |
| ເຊກອງ | 20 | 20 | 0 | 0 | 0 |
| ລວມ | **333** | **328** | **5** | **0** | **0** |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 31 ຕຸລາ 2015*

ຈາກຕາຕະລາງຂ້າງເທິງນີ້ 7 ໂຄງການທີ່ບໍ່ທັນສຳເລັດ ແລະ ກຳລັງຈັດຕັ້ງປະຕິບັດຢູ່ ເຊິ່ງມີລາຍລະອຽດ ແລະ ຄວາມຄືບໜ້າດັ່ງຕາຕະລາງລຸ່ມນີ້:

**ຕາຕະລາງ 4. ໂຄງການທີ່ຫລ້າຊ້າໃນຮອບວຽນ 11**

| ຮອບວຽນ | ຊື່ໂຄງການ | ແຂວງ | ເມືອງ | ກຸ່ມບ້ານ | ບ້ານ | ຄວາມຄືບໜ້າ% |
|---|---|---|---|---|---|---|
| 11 | ກໍ່ສ້າງຕະຫລາດຊຸມຊົນ | ແຂວງ ອັດຕະປື | ພູວົງ | ວົງສຳພັນ | ຄຳວົງສາ | 77 |
| 11 | ສ້ອມແປງລະບົບນໍ້າລິນ | ແຂວງ ຫຼວງພະບາງ | ໂພນໄຊ | ກຸ່ມ ບ້ານນໍ້າບໍ່ | ຫ້ວຍມັນ | 70 |
| 11 | ກໍ່ສ້າງສຸກສາລາ | ແຂວງ ອັດຕະປື | ພູວົງ | ສົມບູນ | ພູຍາງ | 90 |
| 11 | ກໍ່ສ້າງຂົວອູ່ | ແຂວງ ຫລວງນໍ້າທາ | ນາແລ | ພູຫຼວງ | ພູຫຼວງມົກຈິງ | 58 |
| 11 | ກໍ່ສ້າງຂົວອູ່ | ແຂວງ ຫລວງນໍ້າທາ | ລອງ | ບວກບໍ່ (ຈ່າໃໝ່ ) | ແສນຈູມປ(ຈ່າປີ) | 65 |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 31 ຕຸລາ 2015*

ຕາຕະລາງ 5. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 11 (ແຍກຕາມຂະແໜງການ)

| ຂະແໜງການ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ກະສິກຳ ແລະ ປ່າໄມ້ | 38 | 37 | 1 | 0 | 0 |
| ຄົມມະນາຄົມ | 57 | 55 | 2 | 0 | 0 |
| ສາທາລະນະສຸກ | 23 | 22 | 1 | 0 | 0 |
| ສຶກສາ | 119 | 119 | 0 | 0 | 0 |
| ນ້ຳສະອາດແລະສຸຂະອະນາໄມ | 90 | 89 | 1 | 0 | 0 |
| ພະລັງງານ ແລະ ບໍ່ແຮ່ | 6 | 6 | 0 | 0 | 0 |
| ລວມ | 333 | 328 | 5 | 0 | 0 |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 31 ຕຸລາ 2015*

### 1.3. ຮອບວຽນ 9 ແລະ ຮອບວຽນ 10 (ສົກປີ 2012-2013 ແລະ ສົກປີ 2013-2014)

ໃນຮອບວຽນທີ 9 ທລຍ ໄດ້ໃຫ້ການສະໜັບສະໜູນຈຳນວນທັງໝົດ 262 ໂຄງການ ຢູ່ 7 ແຂວງເປົ້າໝາຍ (ອັດຕະປື, ເຊກອງ, ສາລະວັນ, ສະຫວັນນະເຂດ, ຫົວພັນ, ຊຽງຂວາງ ແລະ ຫລວງນ້ຳທາ) ແລະ ນຳໃຊ້ງົບປະມານທັງໝົດ 61,114,300,917 ກີບ ມີຈຳນວນ 261 ໂຄງການເທົ່ານັ້ນທີ່ໄດ້ຈັດຕັ້ງປະຕິບັດສຳເລັດ 100 % ແລະ ງົບປະມານທີ່ໄດ້ນຳໃຊ້ 60,979,645,792 ກີບ ຫລື 99.8 % ຂອງງົບປະມານທັງໝົດ. ເຊິ່ງການຈັດຕັ້ງປະຕິບັດບາງໂຄງການໃນຮອບວຽນດັ່ງກ່າວແມ່ນມີ 1 ໂຄງການຄື ໂຄງການກໍ່ສ້າງຫໍພັກນັກສຶກສາ ຢູ່ແຂວງ ຫລວງນ້ຳທາ ເມືອງນາເລ ກຸ່ມສະເລື່ອງ ບ້ານດອນທົບ ນັ້ນແມ່ນຖືກຍົກເລີກເນື່ອງຈາກຖືກໂຄງການສ້າງເຂື່ອນໄຟຟ້າດັ່ງນັ້ນ ພວກເຮົາສາມາດສະຫລຸບໄດ້ວ່າ ສຳຫລັບຮອບວຽນ 9 ແມ່ນຈັດຕັ້ງປະຕິບັດສຳເລັດແລ້ວ 100%.

ໃນຮອບວຽນທີ 10 ທລຍ ໄດ້ໃຫ້ການສະໜັບສະໜູນທັງໝົດ 393 ໂຄງການ ແລະ ງົບປະມານທັງໝົດຈຳນວນ 79,125,251,302 ກີບ. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແມ່ນຄືກັບທີ່ໄດ້ລາຍງານໃນເດືອນຜ່ານມາ ມີຈຳນວນ 392 ໂຄງການທີ່ໄດ້ສຳເລັດການກໍ່ສ້າງ ແລະ ງົບປະມານຈຳນວນ 78,883,029,606 ກີບ (99.7%) ແມ່ນໄດ້ຖືກໂອນສຳລັບການຈັດຕັ້ງປະຕິບັດໂຄງການຍ່ອຍເຫລົ່ານັ້ນ. ສຳລັບ 1 ໂຄງການທີ່ຍັງບໍ່ສຳເລັດນັ້ນມີຄວາມຄືບໜ້າໜ້ອຍກວ່າ 50% ຢູ່ແຂວງ ຫຼວງນ້ຳທາ ເມືອງນາແລ ກຸ່ມສະແກນ (ບ້ານສະແກນ) ເປັນໂຄງການກໍ່ສ້າງຂົວອູ່ ມີຄວາມລ້າຊ້າເນື່ອງຈາກວ່າໂຄງການດັ່ງກ່າວເປັນໂຄງການທົດລອງ ແລະ ເປັນໂຄງການຂະໜາດໃຫຍ່ ອຸປະກອນສ່ວນໃຫຍ່ແມ່ນນຳມາຈາກຕ່າງປະເທດ ແລະ ກຳລັງຢູ່ໃນຂັ້ນຕອນເພື່ອກຳນົດມາດຕະຖານເຫລັກຄືນໃໝ່, ເປັນທຶນສົມທົບລະຫວ່າງ ທລຍ ແລະ ພາກສ່ວນອື່ນ.

## 2. ງົບປະມານ ແລະ ການເບີກຈ່າຍສໍາລັບການຈັດຕັ້ງປະຕິບັດໂຄງການຍ່ອຍ ທລຍ 2

ສໍາລັບການເບີກຈ່າຍງົບປະມານ ຮອດທ້າຍເດືອນ ຕຸລາ 2015 ໃນແຕ່ລະຮອບວຽນ ຄື: ຮອບວຽນ 9, ເບີກຈ່າຍໄປແລ້ວ 60,979,645,792 ກີບ ເທົ່າກັບ 99.8% ຂອງງົບປະມານທັງໝົດ, ຮອບວຽນ 10 ເບີກຈ່າຍໄປແລ້ວ 78,883,029,606 ກີບ ເທົ່າກັບ 99.7% ຂອງງົບປະມານທັງໝົດ ແລະ ຮອບວຽນ 11 ແມ່ນໄດ້ເບີກຈ່າຍແລ້ວ ຈໍານວນ 75,962,827,932 ກີບ ຫລື ເທົ່າກັບ 98.1% ຂອງງົບປະມານທັງໝົດ ແລະ ສໍາລັບຮອບວຽນ 12 ງົບປະມານທັງໝົດ 82,818,201,583ກີບ ເບີກຈ່າຍໄປແລ້ວ 50,721,782,727 ກີບ ລາຍລະອຽດດັ່ງຕາຕະລາງລຸ່ມນີ້:

**ຕາຕະລາງ 6. ຄວາມຄືບໜ້າໃນການເບີກຈ່າຍງົບປະມານໂຄງການຍ່ອຍ ແຕ່ລະຮອບວຽນ (2011-2015)**

| ຮອບວຽນ (ສົກປີ) | ຈ/ນ ໂຄງການ ທັງໝົດ | ງົບປະມານ (ກີບ) | ຈ/ນ ກໍ່ສ້າງ ສໍາເລັດ 100% | ການເບີກຈ່າຍ ງົບປະມານ (ກີບ) | ຍອດເຫຼືອ |
|---|---|---|---|---|---|
| ຮອບວຽນ 9 (2011-2012) | 262 | 61,114,300,917 | 261 | 60,979,645,792 | 134,655,125 |
| ຮອບວຽນ 10 (2012-2013) | 393 | 79,125,251,302 | 392 | 78,883,029,606 | 242,221,696 |
| ຮອບວຽນ 11 (2013-2014) | 333 | 77,447,824,567 | 328 | 75,962,827,932 | 1,484,996,635 |
| ຮອບວຽນ 12 (2014-2015) | 438 | 82,818,201,583[1] | 353 | 50,721,782,727 | 32,096,418,857 |
| ລວມ | 1,426 | 300,505,578,369 | 1,334 | 266,547,286,057 | 33,958,292,313 |
| ແຜນການເບີກຈ່າຍງົບປະມານໂຄງການຍ່ອຍ ຮອບວຽນ 13 (2015-2016) | | | | | |
| ຮອບວຽນ (ສົກປີ) | ຈ/ນ ໂຄງການ ທັງໝົດ | ງົບປະມານ (ກີບ) | ຈ/ນ ກໍ່ສ້າງ ສໍາເລັດ 100% | ການເບີກຈ່າຍ ງົບປະມານ | ຮອບວຽນ (ສົກປີ) |
| ຮອບວຽນ 13 (ສົກປີ 2015-2016) | 110 | 32,000,000,000 | - | (ຍັງບໍ່ໄດ້ເບີກຈ່າຍ) ການເບີກຈ່າຍນັ້ນ ຈະໄດ້ແບ່ງເປັນ 2 ງວດຄື: ງວດທີໜຶ່ງ ແມ່ນເບີກຈ່າຍ ໃນລະຫວ່າງເດືອນ ມັງກອນ-ກັນຍາ 2016 ແລະ ງວດທີສອງແມ່ນໃນລະຫວ່າງເດືອນ ຕຸລາ-ທັນວາ ຂອງປີ 2016 ງວດລະ 16 ຕື້ກີບ. | ຮອບວຽນ 13 (ສົກປີ 2015-2016) |

*ແຫຼ່ງຂໍ້ມູນ: ພະແນກບໍລິຫານ - ການເງິນ, ທລຍ, 31 ຕຸລາ 2015*

[1] *ງົບປະມານອາດມີການປັບແປງເນື່ອງຈາກສັນຍາກັບຜູ້ຮັບເຫມົາບາງໂຄງການກໍາລັງດໍາເນີນການຢູ່*

3. <u>ວຽກງານວິຊາສະເພາະ ແລະ ຕິດຕາມໂຄງການ</u>

- **ວຽກງານພັດທະນາຊຸມຊົນ**

- ສຳເລັດການປັບປຸງການຂຽນໂຄງຮ່າງການຈັດຕັ້ງຕ່າງໆຂອງບ້ານ ການຈັດຕັ້ງປະຕິບັດໂດຍຊຸມຊົນເຕັມຮູບແບບ (CDD) ທີ່ໄດ້ຮັບໂຄງການຍ່ອຍໃນຮອບວຽນ 12 ສຳລັບ 38 ບ້ານ ຂອງ 5 ເມືອງ ຂອງ 3 ແຂວງ ຄື: ເມືອງໄຊ, ເມືອງນາໝໍ້ (ແຂວງອຸດົມໄຊ), ເມືອງນອງ (ແຂວງສະຫວັນນະເຂດ), ເມືອງ ຈອມເພັດ ແລະ ເມືອງນ້ຳບາກ (ແຂວງຫລວງພະບາງ).
- ສຳເລັດການຈັດກອງປະຊຸມ ກ່ຽວກັບ ການຈັດຕັ້ງປະຕິບັດໂດຍຊຸມຊົນເອງ (Community Force Account) ຢູ່ ສູນວິໃຈພະຍາດ, ນະຄອນຫລວງວຽງຈັນ ລະຫວ່າງວັນທີ 23-25 ກັນຍາ.
- ຊຸກຍູ້ ແລະ ຕິດຕາມການດຳເນີນກອງປະຊຸມປະເມີນຜົນການຈັດຕັ້ງປະຕິບັດວຽກງານ ທລຍ ປະຈຳປີ ໃນຮອບວຽນ 12 ຂອງເມືອງເປົ້າໝາຍ ທລຍ.
- ຊຸກຍູ້ ແລະ ຕິດຕາມ ການດຳເນີນກອງປະຊຸມແນະນຳໂຄງການທົດລອງ ການຈັດຕັ້ງປະຕິບັດໂດຍຊຸມຊົນເຕັມຮູບແບບ (CDD) ແລະ ວຽກງານການປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການ (LN) ຢູ່ 3 ເມືອງເປົ້າໝາຍທົດລອງ ຂອງຮອບວຽນ 13 ຄື: ເມືອງຊຽງຄໍ້ ແລະ ເມືອງຫົວເມືອງ ແຂວງ ຫົວພັນ.
- ເຂົ້າຮ່ວມຊຸດຝຶກອົບຮົມການເປັນຄູຝຶກ ກ່ຽວກັບ ວິທີການທົບທວນແຜນພັດທະນາບ້ານ ແລະ ກຸ່ມບ້ານທີ່ຈັດຕັ້ງປະຕິບັດຢູ່ 5 ເມືອງເປົ້າໝາຍ ການຈັດຕັ້ງປະຕິບັດໂດຍຊຸມຊົນ ເຕັມຮູບແບບ (CDD) ໃນຮອບວຽນ 13.
- ກະກຽມຈັດຊຸດຝຶກອົບຮົມການເປັນຄູຝຶກ ກ່ຽວກັບ ການຈັດຕັ້ງປະຕິບັດ ຂັ້ນຕອນການວາງແຜນໃນຮູບແບບການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນແບບເຕັ້ມຮູບແບບ ສຳລັບ ພະນັກງານ 3 ເມືອງເປົ້າໝາຍ ໃໝ່ທີ່ຈະຈັດຕັ້ງປະຕິບັດທັງສອງວຽກງານນຳກັນ (CDD+LN).
- ເຜີຍແຜ່ຂໍ້ມູນຂ່າວສານຜ່ານກະດານຂ່າວກຸ່ມບ້ານເຊິ່ງມີ 4 ຫົວຂໍ້ຂ່າວ; ຄື: ການຈັດກອງປະຊຸມປະເມີນຜົນການຈັດຕັ້ງປະຕິບັດໂຄງການຂັ້ນແຂວງ, ການຈັດກອງປະຊຸມປະເມີນຜົນໂຄງການຍ່ອຍປະຈຳປີ, ການທົບທວນແຜນພັດທະນາຂັ້ນບ້ານ.
- ເຂົ້າຮ່ວມວາງສະແດງຢູ່ກອງປະຊຸມລັດຖະມົນຕີພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກອາຊຽນ ຄັ້ງທີ 9 ໃນວັນທີ 13-17 ຕຸລາ 2015 ທີ ສປປ ລາວ ເປັນເຈົ້າພາບ.
- ໄດ້ມີການເຜີຍແຜ່ຂໍ້ມູນ-ຂ່າວສານຜ່ານວິທະຍຸແຫ່ງຊາດ, ລາຍການລຸງສ້າງ-ລຸງສາ, ກົມຂ່າວສານແມ່ຍິງລາວ, ໜັງສືພິມຕ່າງໆ ແລະ ເວບໄຊ ທລຍ ລວມມີ 5 ຫົວຂໍ້ຂ່າວ.

- **ວຽກງານວິສະວະກຳ ແລະ ວິຊາການ**

- ສືບຕໍ່ປັບປຸງອອກແບບການປະດັບປະດາລົດແຫ່ຂະບວນສະເຫລີມສະຫລອງວັນຊາດທີ 2 ແລະ ສືບຕໍ່ລົງຕິດຕາມໂຄງການຍ່ອຍ ຮອບວຽນທີ 11, 12 ໃຫ້ສຳເລັດຜົນ ແລະ ອຳນວຍຄວາມສະດວກຕໍ່ຊຸມຊົນ.
- ສືບຕໍ່ເຮັດວຽກຮ່ວມກັບ ອົງການແຮງງານສາກົນ (ILO) ແລະ ຕິດຕາມຄວາມຄືບໜ້າ.

- ສືບຕໍ່ກວດກາຈຳນວນບ້ານ ທີ່ກະກຽມຈັດຕັ້ງປະຕິບັດໂຄງການຮ່ວມມືກັບອີງ ການນ້ຳ ແລະ ສຸກຂະອະນາໄມ ແລະ ນ້ຳສະອາດ.
- ສືບຕໍ່ສັງລວມຂໍ້ມູນທີ່ຕັ້ງໂຄງການຍ່ອຍ ຮອບວຽນທີ 9-12.
- ຈັດກອງປະຊຸມ ກ່ຽວກັບ ວຽກງານຊຸມຊົນເປັນເຈົ້າໃນດ້ານສຸຂະອານາໄມ (ຊຈສ) ຢູ່ເມືອງເຊໂປນ, ແຂວງ ສະຫວັນນະເຂດ.
- ສືບຕໍ່ກວດຄືນ ແລະ ປັບປຸງແບບແຕ້ມກໍ່ສ້າງອາຄານ ຕາມການຕົກລົງກັນໃນການຝຶກອົບຮົມປະຈຳປີ.
- ສຳເລັດການກະກຽມແຜນປະຈຳໄຕມາດ 10-12/2015 ແລະ ປະຈຳປີ 2015-2016

- <u>ວຽກງານຕິດຕາມ-ປະເມີນຜົນ</u>

- ເອົາໃຈໃສ່ຕິດຕາມ ແລະ ລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການຍ່ອຍທັງໝົດ 10 ແຂວງ ທີ່ ທລຍ ໄດ້ໃຫ້ການຊ່ວຍເຫຼືອເພື່ອຮັບປະກັນວ່າໂຄງການເຫຼົ່ານັ້ນສຳເລັດຕາມແຜນ, ສາມາດອຳນວຍ ຄວາມສະດວກຕໍ່ຊີວິດການເປັນຢູ່ຂອງພໍ່ແມ່ປະຊາຊົນ ແລະ ມີຄວາມຍືນຍົງໂດຍຜ່ານການປະຕິບັດຂອງຄະນະ ຄຸ້ມຄອງ ແລະ ນຳໃຊ້.
- ເພື່ອຮັບປະກັນທາງປະສິດທິພາບທາງດ້ານຂໍ້ມູນ ແລະ ການລາຍງານ ທລຍ ໄດ້ມີການປັບປຸງລະບົບຖານຂໍ້ມູນ ທີ່ສາມາດໃຊ້ໄດ້ທັງລະບົບອິນເຕີເນັດ ແລະ ບໍ່ມີອິນເຕີເນັດ, ມີການດັດແກ້ໃຫ້ສອດຄ່ອງກັບແບບຟອມ ແລະ ຕົວຊີ້ວັດຂອງໂຄງການຕາມການເຫັນດີຈາກຜູ້ໃຫ້ທຶນ ແລະ ລັດຖະບານ.
- ເອົາໃຈໃສ່ເຮັດໃຫ້ສຳເລັດ ບົດລາຍງານປະຈຳສົກປີ 2014 – 2015 ທີ່ໄດ້ຮວບຮວມເອົາຜົນສຳເລັດ ແລະ ຂໍ້ຄົງຄ້າງທີ່ຕ້ອງໄດ້ສືບຕໍ່ປັບປຸງແກ້ໄຂໃນສົກປີຕໍ່ໄປ ແລະ ການກະກຽມ ທລຍ ໃນໄລຍະຕໍ່ໄປ.

- <u>ວຽກງານບໍລິຫານ - ການເງິນ</u>

- ສຳເລັດການຄ່ຽນເງິນໂຄງການຍ່ອຍບ້ວງຜູ້ໃຫ້ທຶນສຳລັບຮອບວຽນ 12 ຂອງແຂວງທີ່ວພັນນຳຄັງເງິນແຫ່ງຊາດ ຈຳນວນ 1,315,754 ໂດລາ ແລະ ຄ່ຽນເງິນປະຈຳເດືອນ 313,683 ໂດລາ ສຳລັບລາຍຈ່າຍບໍລິຫານປະຈຳ ເດືອນກັນຍາ 2015.
- ປິດບັນຊີທ້າຍປີ 2014-2015 ເດືອນກັນຍາ 2015, ເພື່ອກະກຽມກວດສອບຈາກພາຍນອກ ແລະ ເຮັດບົດລາຍ ງານການເງິນໃຫ້ຜູ້ໃຫ້ທຶນ.
- ສຳເລັດການເບີກຖອນເງິນໂຄງການຍ່ອຍບ້ວງທຶນສົມທົບລັດຖະບານປະຈຳຮອບວຽນ 12, ຈຳນວນ 5 ໂຄງການ ຈາກ 74 ໂຄງການທັງຫມົດ, ເປັນມູນຄ່າ 688,816,000 ກີບ.

- ພະນັກງານການເງິນສູນກາງໄດ້ລົງຝຶກອົບຮົມວຽກງານສະຫລຸບໂຄງການຍ່ອຍໃນຮູບແບບຂອງການຈັດຕັ້ງປະຕິບັດໂດຍຊຸມຊົນ ເຕັມຮູບແບບ (CDD) ທີ່ແຂວງອຸດົມໄຊ, ຫລວງພະບາງ ແລະ ສະຫວັນນະເຂດ, ໂດຍສະເພາະແມ່ນເມືອງທົດລອງ.
- ທີມງານບໍລິຫານ-ການເງິນໄດ້ຮ່ວມປະຊຸມວາງແຜນກັບທີມງານກວດສອບພາຍນອກສຳລັບການກວດສອບສົກປີ 2014-2015.

- <u>ວຽກງານຈັດຕັ້ງ</u>

- ກະກຽມປະເມີນຜົນງານການຈັດຕັ້ງປະຕິບັດວຽກຂອງຊ່ຽວຊານທີ່ປຶກສາອາວຸໂສ (ທ່ານ ຈູລຽນ ໂຣສຊາດ) ເພື່ອຂໍສະເໜີຕໍ່ສັນຍາເຮັດວຽກເປັນລາຍປີ ໄດ້ສົ່ງຮ່າງສັນຍາເຮັດວຽກ ຫາຜູ້ໃນທຶນໃນວັນທີ 26/10/2015 ເພື່ອສະເໜີຂໍຕໍ່ສັນຍາໃຫ້ຊ່ຽວຊານ, ປະຈຸບັນຍັງຢູ່ໃນໄລຍະລໍຖ້າຄຳຕອບຈາກຜູ້ໃຫ້ທຶນ.
- ປະສານງານກັບຄະນະຮັບຜິດຊອບໂຄງການ ເພື່ອປັບປຸງພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງຊ່ຽວຊານຕ່າງປະເທດ ດ້ານວຽກງານປັບປຸງຊີວິດການເປັນຢູ່ ເຊື່ອມສານໂພຊະນາການ ເພື່ອສະເໜີຂໍຕໍ່ສັນຍາ: ໄດ້ຮັບການສະໜອງຄຳຄິດເຫັນຈາກບາງພະແນກ, ເຊິ່ງສາມາດຕີລາຄາຄວາມຄືບໜ້າໄດ້ 50%.
- ດຳເນີນຂະບວນການປະກາດຮັບສະໝັກ ແລະ ຄັດເລືອກ ພະນັກງານຂັ້ນສູນກາງ:
    - ➢ ຫົວໜ້າຮັບຜິດຊອບວຽກປັບປຸງຊີວິດການເປັນຢູ່ ເຊື່ອມສານດ້ານໂພຊະນາການ: ຍັງບໍ່ສາມາດປະກາດຮັບສະໝັກໄດ້ ເນື່ອງຈາກຫາກໍ່ໄດ້ຮັບຄຳເຫັນສຸດທ້າຍຈາກຜູ້ໃຫ້ທຶນ ຕໍ່ກັບກັບພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ ຂອງຕຳແໜ່ງດັ່ງກ່າວ ໃນວັນທີ 04/11/2015. ຄາດວ່າຈະໄດ້ລົງປະກາດໃນໜັງສືພິມເລີ້ມວັນທີ 9/11/2015.
    - ➢ ພະນັກງານຄຸ້ມຄອງລະບົບຖານຂໍ້ມູນວຽກງານປັບປຸງຊີວິດການເປັນຢູ່ ເຊື່ອມສານດ້ານໂພຊະນາການ: ຍັງບໍ່ສາມາດປະກາດຮັບສະໝັກໄດ້ ເພາະວ່າຈະຕ້ອງໄດ້ມີການພັດທະນາພາລະບົດບາດ ແລະໜ້າທີ່ຄວາມຮັບຊອບຕື່ມອີກ (ປະຈຸບັນກຳລັງແປເອກະສານຈາກພາສາລາວ ເປັນອັງກິດ ເພື່ອສົ່ງຫາຜູ້ໃຫ້ທຶນ ມີຄຳເຫັນ).
    - ➢ ຜູ້ຊ່ວຍດ້ານບັນຊີ: ສຳເລັດການຄັດເລືອກ, ພະນັກງານທີ່ໄດ້ຮັບຄັດເລືອກ ຈະເລີ້ມເຂົ້າເຮັດວຽກ ໃນວັນທີ 16/11/2015.
    - ➢ ຜູ້ກວດສອບພາຍໃນດ້ານໂຄງການຍ່ອຍ: ສຳເລັດການຄັດເລືອກ, ພະນັກງານທີ່ໄດ້ຮັບຄັດເລືອກ ຈະເລີ້ມເຂົ້າເຮັດວຽກ ໃນວັນທີ 16/11/2015.
- ດຳເນີນຂະບວນການປະກາດຮັບສະໝັກ ແລະ ຄັດເລືອກ ພະນັກງານຂັ້ນແຂວງ:
    - ➢ ພະນັກງານຂັບລົດ ປະຈຳແຂວງຜົ້ງສາລີ: ສຳເລັດການຄັດເລືອກ, ພະນັກງານທີ່ໄດ້ຮັບຄັດເລືອກ ຈະເລີ້ມເຂົ້າເຮັດວຽກ ໃນວັນທີ 01/11/2015.
- ດຳເນີນຂະບວນການປະກາດຮັບສະໝັກ ແລະ ຄັດເລືອກ ພະນັກງານຂັ້ນເມືອງ:

- ➢ ປະສານງານຂັ້ນເມືອງ ປະຈຳເມືອງ ສະເພາະເມືອງທີ່ຈັດຕັ້ງປະຕິບັດວຽກປັບປຸງຊີວິດການເປັນຢູ່ ເຊື່ອມສານໂພຊະນາການ: ຍັງບໍ່ສາມາດປະກາດຮັບສະໝັກໄດ້ ເນື່ອງຈາກວ່າຍັງບໍ່ທັນສຳເລັດການກຳນົດພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ (ປະຈຸບັນສຳເລັດ 80%).
- ➢ ສຳເລັດການຮັບສະໝັກ ແລະ ຄັດເລືອກພະນັກງານ ແລະ ນັກສຶກສາຈົບໃໝ່ ຢູ່ຂັ້ນເມືອງ ແລະ ບ້ານ ເພື່ອປະຈຳຢູ່ 7 ເມືອງ (ຫົວເມືອງ, ຊຽງຄໍ້, ຊ່ອນ, ຮ້ຽມ, ເຊໂປນ, ນອງ, ທ່າປາງທອງ) ຈຳນວນ 68 ຕຳແໜ່ງ ແລະ ທັງໝົດ ໄດ້ເລີ່ມປະຈຳການ ນັບແຕ່ວັນທີ 01/10/2015.

- ສືບຕໍ່ປະສານງານກັບຊ່ຽວຊານຕ່າງປະເທດ ກ່ຽວກັບການສ້າງປຶ້ມຄູ່ມືວຽກງານຈັດຕັ້ງ-ພະນັກງານ: ໃນວັນທີ 20/10/2015 ໄດ້ຮັບປຶ້ມຄູ່ມືການຄຸ້ມຄອງບໍລິຫານຊັບພະຍາກອນມະນຸດ ສະບັບປັບປຸງ ຄັ້ງທີ 3 (ໂດຍໄດ້ແຍກຄູ່ມືການພັດທະນາຊັບພະຍາກອນມະນຸດອອກຕ່າງຫາກ) ຈາກຊ່ຽວຊານ.
- ເຂົ້າຮ່ວມຮັບໃຊ້ກອງປະຊຸມລັດຖະມົນຕີພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ອາຊຽນ ຄັ້ງທີ 9 ແລະ ກອງປະຊຸມທີ່ກ່ຽວຂ້ອງ ໃນໄລຍະວັນທີ 12-18 ຕຸລາ 2015: ການຮັບໃຊ້ວຽກດັ່ງກ່າວ ໄດ້ສຳເລັດເປັນຢ່າງດີ.

▪ <u>ວຽກງານປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການ</u>

- ຕິດຕາມກວດກາການທ້ອນເງິນຂອງກຸ່ມ ກຊກ ໃນ 4 ຕົວເມືອງລວມ ທັງໝົດທີ່ໄດ້ຍົກຍອດມາເຖິງປະຈຸບັນໃນ 4 ຕົວເມືອງເປົ້າໝາຍ ເມືອງຮ້ຽມ, ຊ່ອນ ເຊໂປນ ແລະ ເມືອງນອງ ມີເງິນທ້ອນທັງໝົດ: 275.781.000 ກີບ.
- ໄດ້ສັງລວມການປ່ອຍເງິນໃຫ້ສະມາຊິກກູ້ຢືມໃນ 4 ຕົວເມືອງເປົ້າໝ. ຕີລາຄາລວມໄດ້ວ່າ ການປ່ອຍເງິນໃຫ້ສະມາຊິກກູ້ຢືມໃນເດືອນນີ້ແມ່ນມີຄວາມຫຍຸ້ງຍາກເພາະວ່າທຸກສະມາຊິກແມ່ນກຳລັງເກັບກູ້ຜົນຜະລິດ.
- ສັງລວມຈຳນວນໂຕສັດສັດທີ່ມີແຕ່ລະເມືອງມາຮອດປະຈຸບັນ. ເຫັນໄດ້ວ່າການລ້ຽງສັດຂອງສະມາຊິກປັດຈຸບັນເຫັນວ່າເຂົາເຈົ້າໄດ້ເອົາໃຈໃສ່ດີ ສະແດງອອກບ່ອນວ່າ ເຂົາເຈົ້າໄດ້ໄປຊື້ຢາວັກຊີນມາສັກດ້ວຍຕົນເອງແຕ່ລະຄອບຄົວ.
- ສະຫລຸບສັງລວມງົບປະມານ ແລະ ລາຍຈ່າຍ ຂອງວຽກໂພຊະນາການໃນ 15 ສູນໂພຊະນາການ ລວມຈຳນວນເງິນທັງໝົດທີ່ສະໜັບສະໜູນລວມທັງໝົດມີ 1,378,225,000 ແລະ ໄດ້ໂອນໃຫ້ແຕ່ລະ ສູນໂພຊະນາການແລ້ວ ແລະ ເງິນຍັງເຫລືອທັງໝົດມີ 639,404,000 ກີບ.
- ສະຫລຸບສັງລວມງົບປະມານ ແລະ ລາຍຈ່າຍ ຂອງວຽກໂພຊະນາການໃນ 4 ຕົວເມືອງ.

## 4. <u>ແຜນວຽກສຳລັບເດືອນ ພະຈິກ 2015</u>

▪ <u>ວຽກງານພັດທະນາຊຸມຊົນ</u>

- ຈັດກອງປະຊຸມທົບທວນຄືນການວາງແຜນພັດທະນາຂັ້ນບ້ານ ແລະ ຂັ້ນກຸ່ມບ້ານ ຮອບວຽນ 13 (ສົກ 2015-2016) ຢູ່ ທລຍ 10 ແຂວງ.
- ຈັດກອງປະຊຸມແນະນຳໂຄງການຂັ້ນແຂວງ, ເມືອງ ແລະ ບ້ານ ຂອງ 3 ເມືອງໃໝ່ ການຈັດຕັ້ງປະຕິບັດໂດຍຊຸມຊົນເຕັມຮູບແບບ (CDD).

- ສືບຕໍ່ຊຸກຍູ້ ແລະ ຕິດຕາມ ການຈັດກອງປະຊຸມປະເມີນຜົນການຈັດຕັ້ງປະຕິບັດວຽກງານ ທລຍ ປະຈຳປີຂັ້ນແຂວງ ໃນຮອບວຽນ 13 ຢູ່ແຂວງເປົ້າໝາຍ ທລຍ.
- ຕິດຕາມ ແລະ ສັງລວມ ຂໍ້ມູນ ຜົນກະທົບ ທາງສັງຄົມ ໃນໄລຍະ ກາງ ແລະ ໄລຍະ ທ້າຍຂອງການຈັດຕັ້ງປະຕິບັດ ໂຄງການຍ່ອຍ.
- ເຮັດບົດລາຍງານຜົນສຳເລັດຂອງການຈັດຕັ້ງປະຕິບັດວຽກງານ ວຽກງານກະຈ່າຍຂໍ້ມູນຂ່າວສານ, ການສຶກສາ ແລະ ປະຊາສຳພັນ ປະຈຳປີ 2014-2015 ແລະ ສ້າງແຜນເຄື່ອນໄຫວວຽກງານສົກປີ 2015-2016
- ທົບທວນຄືນ ບັນດາບົດບັນທຶກຄວາມເຂົ້າໃຈ ກ່ຽວກັບວຽກງານກະຈ່າຍຂໍ້ມູນຂ່າວສານຂັ້ນແຂວງ ແລະ ເມືອງ ແລະ ສູນກາງ ເພື່ອກຽມພ້ອມສືບຕໍ່ເຊັນສັນຍາ ເພື່ອກະຈາຍຂໍ້ມູນຂ່າວສສານໃນຮອບວຽນທີ່ 13 ຂອງ ທລຍ.
- ກະກຽມພະລິດປຶ້ມ ນະໂຍບາຍດ້ານຊົນເຜົ່າ ພາລາວ-ອັງກິດ, ນະໂຍບາຍການຍົກຍ້າຍຖິ່ນຖານ ແລະ ທົດແທນຄືນ ພາສາລາວ-ອັງກິດ, ນະໂຍບາຍດ້ານສັງຄົມ ແລະ ສິ່ງແວດລ້ອມ ພາສາລາວ-ອັງກິດ, ປຶ້ມສະມາຊິກກຸ່ມທ້ອນເງິນ ຂອງກິດຈະກຳປັບປຸງຊີວິດການເປັນຢູ່ ເພື່ອຮັບໃຊ້ໃນການຂະຫຍາຍອີກ 80 ບ້ານ.
- ກະກຽມວາງສະແດງ ຕະຫລາດນັດກຸ່ມແມ່ຍິງສາກົນ ໃນວັນທີ 7 ພະຈິກ 2015 ທີ ໂຮງຮຽນຊັບພະວິຊາ ໂສກປ່າ ຫລວງ.

- <u>ວຽກງານວິສະວະກຳ</u>

- ລໍຖ້າຄຳຕອບຈາກຂັ້ນເທິງກ່ຽວກັບການປະດັບປະດາລົດແຫ່ຂະບວນສະເຫລີມສະຫລອງວັນຊາດທີ 2
- ສືບຕໍ່ກະກຽມແຜນລົງກວດກາໂຄງການຍ່ອຍ ພາຍໃຕ້ທຶນສົມທົບລັດຖະບານ ຮ່ວມກັບສະພາແຫ່ງຊາດ, ກະຊວງການເງິນ, ຄພທສ ແລະ ກະຊວງແຜນການ.
- ສືບຕໍ່ລົງຕິດຕາມໂຄງການຍ່ອຍ ຮອບວຽນທີ 11, 12 ແລະ ສືບຕໍ່ເຮັດວຽກຮ່ວມກັບ ອົງການແຮງງານສາກົນ (ILO).
- ສືບຕໍ່ກະກຽມສຳຫລວດໂຄງການຍ່ອຍ IDA ຮອບວຽນທີ 13.
- ສືບຕໍ່ຝຶກອົບຮົມຜູ້ອຳນວຍຄວາມສະດວກດ້ານ ວຽກງານ ຊຸມຊົນເປັນເຈົ້າໃນດ້ານສຸຂະອານາໄມ (ຊຈສ) ຢູ່ເມືອງ ນອງ, ແຂວງສະຫວັນນະເຂດ; ແຂວງສາລະວັນ, ເຊກອງ ແລະ ອັດຕະປື.
- ສືບຕໍ່ກະກຽມຝຶກອົບຮົມພື້ນຖານການນຳໃຊ້ໂປຣແກຣມແຜນທີ່ ແລະ ສືບຕໍ່ກະກຽມສ້າງຫລັກສູດການນຳໃຊ້ 3D.
- ສືບຕໍ່ກະກຽມແຜນລົງຕິດຕາມຄຸນນະພາບໂຄງການຮອບວຽນ 11 ຮ່ວມກັບຊ່ຽວຊານທະນາຄານໂລກ ທ່ານ Garvan.
- ສືບຕໍ່ກະກຽມເອກະສານກວດກາທາງດ້ານສິ່ງແວດລ້ອມ ປະກອບເຂົ້າໃນໂຄງການ ທີ່ຊຸມຊົນເປັນຜູ້ຈັດຕັ້ງປະຕິບັດ Community Force Account (CFA).

- ສືບຕໍ່ກະກຽມຫລັກສູດການກວດກາຄຸນນະພາບສໍາລັບຊຸມຊົນ ເພື່ອໄປຝຶກອົບຮົມໃຫ້ທີມງານຈັດຕັ້ງປະຕິບັດຂັ້ນບ້ານ ສໍາລັບໂຄງການທີ່ຊຸມຊົນເປັນຜູ້ຈັດຕັ້ງປະຕິບັດ.
- ຝຶກອົບຮົມຮູບແບບ ແລະ ວິທີການຈັດຕັ້ງປະຕິບັດໂຄງການທົດລອງ ການຈັດຕັ້ງປະຕິບັດໂດຍຊຸມຊົນເຕັມຮູບແບບ ຢູ່ແຂວງຫລວງພະບາງ, ອຸດົມໄຊ ແລະ ສະຫວັນນະເຂດ.

▪ <u>ວຽກງານຕິດຕາມ-ປະເມີນຜົນ</u>

- ເພື່ອເປັນຂໍ້ມູນສໍາຄັນໃນການກະກຽມ ທລຍ 3 ແມ່ນໄດ້ເຂົ້າຮ່ວມກັບຊ່ຽວຊານຈາກ ອິດສະຕາລີ ເພື່ອສຶກສາ ແລະ ຖອດຖອນບົດຮຽນ ກ່ຽວກັບວຽກງານ ສາມສ້າງ ຢູ່ແຂວງ ຫຼວງນໍ້າທາ, ສາລະວັນ ແລະ ແຂວງ ສະຫວັນນະເຂດ. ທັງນີ້ກໍເພື່ອເປັນຂໍ້ມູນສໍາຄັນແກ່ ຄພທສ, ທລຍ ແລະ ອົງການພັດທະນາຕ່າງໆໃນ ສປປ ລາວ ໄດ້ຮັບຮູ້ກ່ຽວກັບຈຸດປະສົງຄາດໝາຍ, ລະບຽບການ ແລະ ເປົ້າໝາຍສູ້ຊົນຂອງວຽກງານ ສາມສ້າງ. ສ່ວນບົດລາຍງານຄາດວ່າຈະເຮັດສໍາເລັດໃນທ້າຍເດືອນ ພະຈິກ ປີ 2015 ນີ້.
- ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດວຽກງານ ທລຍ ໃນແຕ່ລະແຂວງ ແລະ ກະກຽມວຽກງານໃນສົກປີ 2015 – 2016.
- ເຮັດສໍາເລັດ ແລະ ສົ່ງບົດລາຍງານປະຈໍາປີ 2014 – 2015 ສະບັບພາສາອັງກິດໃຫ້ຜູ້ໃຫ້ທຶນ.

▪ <u>ວຽກງານບໍລິຫານ-ການເງິນ</u>

- ກະກຽມເຮັດບົດລາຍງານປະຈໍາໄຕມາດ 4, ສໍາລັບສົກປີ 2014-2015, ໃຫ້ຜູ້ໃຫ້ທຶນ
- ປິດສະຫລຸບບັນຊີປະຈໍາເດືອນ ຕຸລາ 2015, ສໍາລັບສົກປີ 2015-2016
- ກະກຽມເບີກຖອນເງິນໂຄງການຍ່ອຍບ້ວງທຶນສົມທົບລັດຖະບານຮອບວຽນ 12, ຈໍານວນ 35 ໂຄງການ, ປະມານ 6 ຕື້ກີບ
- ເຮັດວຽກຮ່ວມກັບທີມງານຜູ້ກວດສອບພາຍນອກທີ່ຈະເຂົ້າມາເລີ່ມວຽກແຕ່ວັນທີ 16 ພະຈິກ 2015, ເປັນຕົ້ນໄປ.
- ກະກຽມເອກະສານຄ່ຽນເງິນໂຄງການຍ່ອຍບ້ວງຜູ້ໃຫ້ທຶນສໍາລັບຮອບວຽນ 12 ຂອງແຂວງ ຊຽງຂວາງ ແລະ ສະຫວັນນະເຂດ 825,433 ໂດລາ ນໍາຄັງເງິນແຫ່ງຊາດ
- ກະກຽມຄ່ຽນເງິນບ້ວງບໍລິຫານປະຈໍາເດືອນ ຕຸລາ 2015 ຈໍານວນ 265,374 ໂດລາ, ນໍາຄັງເງິນແຫ່ງຊາດ

▪ <u>ວຽກງານຈັດຕັ້ງ</u>

- ປະກາດຮັບສະໝັກ ຕໍາແໜ່ງຫົວໜ້າປັບປຸງຊີວິດການເປັນຢູ່ ເຊື່ອມສານໂພຊະນາການ .
- ສໍາເລັດພາລະບົດບາດ ຂອງພະນັກງານຄຸ້ມຄອງລະບົບຖານຂໍ້ມູນວຽກງານປັບປຸງຊີວິດການເປັນຢູ່ ເຊື່ອມສານໂພຊະນາການ ຂັ້ນສູນກາງ ແລະ ຕໍາແໜ່ງຜູ້ປະສານງານເມືອງ ເພື່ອປະຈໍາຢູ່ 7 ເມືອງ; ພ້ອມດຽວກັນ ກໍຈະຕ້ອງໄດ້

ປະກາດຮັບສະໝັກ ແລະ ຄັດເລືອກພະນັກງານ ຕຳແໜ່ງດັ່ງກ່າວໄວທີ່ສຸດ ຫລັງຈາກໄດ້ຮັບຄຳເຫັນຈາກຜູ້ໃຫ້ທຶນຕໍ່ກັບໜ້າທີ່ຮັບຜິດຊອບ ທີ່ສະເໜີໄປ.

- ປະເມີນຜົນການຈັດຕັ້ງປະຕິບັດວຽກ ຕຳແໜ່ງຄຸ້ມຄອງບໍລິຫານງົບປະມານຂັ້ນສູນກາງ ແລະ ສະເໜີຫາຜູ້ໃຫ້ທຶນເພື່ອຂໍຕໍ່ສັນຍາຜູ້ກ່ຽວ.
- ສະເໜີຫາຜູ້ໃຫ້ທຶນ ເພື່ອຂໍຕໍ່ສັນຍາທີ່ປຶກສາຕ່າງປະເທດ ດ້ານວຽກງານປັບປຸງຊີວິດການເປັນຢູ່ ເຊື່ອມສານໂພຊະນາການ.

▪ <u>ວຽກງານປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການ</u>

- ຕິດຕາມກວດກາການທ້ອນເງິນ, ການເກັບກູ້ ແລະ ການປ່ອຍກູ້ ຂອງສະມາຊິກ ກຸ່ມ ກຊກ.
- ຕິດຕາມເກັບກຳ ກິດຈະກຳປັບປຸງຊີວິດການເປັນຢູ່ ແລະ ມີກິດຈະກຳໃດທີ່ສ້າງລາຍຮັບໄດ້ແລ້ວ ແລະ ໄດ້ຈຳນວນເທົ່າໃດໃນແຕ່ລະເດືອນ. ຕິດຕາມການປ່ອຍເງິນກູ້ໃຫ້ສະມາຊິກໃນຮອບວຽນ 3 ທີ່ກຳລັງປະຕິບັດຢູ່ໃນປະຈຸບັນໃຫ້ສຳເລັດໃນເດືອນ ພະຈິກ 2015.
- ກະກຽມຝຶກອົບຮົມໃຫ້ຊາວບ້ານແຕ່ລະກິດຈະກຳໃນຮອບວຽນທີ່ 3 ທີ່ບໍ່ທັນສຳເລັດເທື່ອ.
- ກະກຽມຝຶກອົບຮົມການເງິນຈຸນລະພາກ ແລະ ວິຊາລ້ຽງສັດ-ສັດຕະວະແພດໃຫ້ພະນັກງານໃໝ່ຂອງໂຄງການປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການ ໃນແຕ່ລະເມືອງ
- ສືບຕໍ່ປຸງແຕ່ງອາຫານກາງວັນຢູ່ສູນໂພຊະນາການ ໃນ 15 ສູນເກົ່າ
- ສືບຕໍ່ໃຫ້ຄວາມຮູ້ດ້ານສຸຂະສຶກສາ ແລະ ປະເມີນພາກໂພຊະນາການຂອງແມ່ ແລະ ເດັກໃຫ້ໄດ້ບ້ານລະຄັ້ງຕໍ່ເດືອນ.
- ລົງໄປໃຫ້ສຸຂະສຶກສາ ແຕ່ລະບ້ານທີ່ບໍ່ມີສະໂມສອນໂພຊະນາການ.

| <u>ຜູ້ອຳນວຍການບໍລິຫານ ທລຍ</u> | <u>ຫົວໜ້າພະແນກ ຕິດຕາມປະເມີນຜົນ</u> | <u>ສັງລວມ ແລະ ລາຍງານ</u> |
|---|---|---|
| ---------------------- | ---------------------- | ---------------------- |
| ບຸນກວ້າງ ສຸວັນນະພັນ | ທັດທະຈັນ ພົມພັນທະວົງ | ສິດທິເດດ ກົງວົງສາ |